ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມຊົນລະປະທານ

ເລກທີ 1673/ຊປທ

ນະຄອນຫຼວງວຽງຈັນ, ວັນທີ 13 MAY 2026

# ໜັງສືແຈ້ງເຊີນປະມູນ

1. ກົມຊົນລະປະທານ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະ ທີ່ດຳເນີນກິດຈະການ ທີ່ປຶກສາຄຸມງານການກໍ່ສ້າງຊົນລະປະທານ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ທີ່ປຶກສາຄຸມງານການກໍ່ສ້າງໂຄງການຊົນລະປະທານ ທີ່ໄດ້ຮັບອະນຸມັດງົບປະມານລົງ ທຶນຂອງລັດ ປະຈຳປີ 2026 ຈຳນວນ 2 ໂຄງການ ຄື: 1) ທີ່ປຶກສາ ຄຸມງານການກໍ່ສ້າງ ໂຄງການຊົນລະປະທານ ຫ້ວຍລາ ບ້ານນາໄກ່ ເມືອງແອດ ແຂວງຫົວພັນ; ແລະ 2) ທີ່ປຶກສາ ຄຸມງານການກໍ່ສ້າງ ໂຄງການຊົນລະປະທານ ດອນຄອນລາດ ເມືອງທ່າພະບາດ ແຂວງບໍລິຄຳໄຊ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການໃຫ້ຄຳປຶກສາຄຸມງານການກໍ່ສ້າງໂຄງການຊົນລະປະທານ;
4. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ພະແນກແຜນການ ແລະ ການຮ່ວມມື, ກົມຊົນລະປະທານ ຊັ້ນ 2, ບ້ານອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທ 020 5544 6691; 021 457 333, ຊຶ່ງຈະໄດ້ຂະຫຍາຍເວລາໃນການຂາຍຊອງປະມູນເລີ່ມແຕ່ວັນທີ 12 ພຶດສະພາ 2026 (ໃນໂມງລັດຖະການ);
5. ຊອງປະມູນ ທີ່ປຶກສາ ຄຸມງານການກໍ່ສ້າງ ໂຄງການຊົນລະປະທານ ຫ້ວຍລາ ບ້ານນາໄກ່ ເມືອງແອດ ແຂວງຫົວພັນ ຕ້ອງສົ່ງກ່ອນເວລາ 16:30 ໂມງ ຂອງວັນທີ 27/5/2026; ແລະ 2) ຊອງປະມູນ ທີ່ປຶກສາ ຄຸມງານການກໍ່ສ້າງ ໂຄງການຊົນລະປະທານ ດອນຄອນລາດ ເມືອງທ່າພະບາດ ແຂວງບໍລິຄຳໄຊ ຕ້ອງສົ່ງກ່ອນເວລາ 10:30 ໂມງ ຂອງວັນທີ 28/5/2026. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໂດຍຊ້ອງໜ້າຄະນະກຳມະ ການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກົມຊົນລະປະທານ

K. [signature]

ປອ ຄຳພະຈັນ ວົງຊະນະ